ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# ຮັບສະໝັກເພື່ອນຮ່ວມງານ

ຮ່ວມເປັນສ່ວນໜຶ່ງ...
ກ້າວໄປຂ້າງໜ້າສູ່ຄວາມສຳເລັດກັບພວກເຮົາ



**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ** ເປັນທະນາຄານທີ່ດຳເນີນການເຄື່ອນໄຫວອຽກງານພາຍໃຕ້ການຄຸ້ມຄອງຂອງກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ. ທຄຕລ ມີຄວາມມຸ່ງໝັ້ນໃນການສ້າງປະໂຫຍດ ແລະ ອຳນວຍຄວາມສະດວກໃນການເຮັດທຸລະກຳທາງດ້ານການເງິນໃຫ້ແກ່ລູກຄ້າ. ປະຈຸບັນ ທຄຕລ ມີ 19 ສາຂາ ແລະ ຫຼາຍກວ່າ 70 ໜ່ວຍບໍລິການທົ່ວປະເທດ. ພວກເຮົາມີຄວາມຍິນດີ ແລະ ຕ້ອງການເພື່ອນຮ່ວມງານເພື່ອເຂົ້າມາຮ່ວມສ້າງສາ ແລະ ພັດທະນາ ທຄຕລ ໃຫ້ມີຄວາມກ້າວໜ້າ ແລະ ເຕີບໃຫຍ່ໄປພ້ອມໆກັນ.

## I. ພະນັກງານທີ່ປະກອບໃຫ້ ທຄຕລ ສຳນັກງານໃຫຍ່

### ❖ ວິຊາການຂະແໜງນິຕິກຳ 02 ຕຳແໜ່ງ

**ເງື່ອນໄຂຜູ້ສະໝັກ:** ເພດ: **ຍິງ ຫຼື ຊາຍ** ແລະ ມີອາຍຸ **24 - 35** ປີ.

- ✓ ມີໃບປະກາດຈົບປະລິນຍາຕີຂຶ້ນໄປ ດ້ານກົດໝາຍ ( ກົດໝາຍແພ່ງ; ກົດໝາຍອາຍາ; ກົດໝາຍທຸລະກິດ ຫຼື ສາຂາທີ່ກ່ຽວຂ້ອງ) ຈາກພາຍໃນ ຫຼື ຕ່າງປະເທດ.
- ✓ ຄະແນນ CGPA ໂດຍສະເລ່ຍ **2.70** ຂຶ້ນໄປ.
- ✓ ສາມາດສື່ສານພາສາອັງກິດຢ່າງເປັນທາງການ (ເວົ້າ, ຂຽນ, ອ່ານ), ສາມາດແປເອກະສານທາງດ້ານກົດໝາຍ, ສັນຍາທາງການໄດ້.
- ✓ ສາມາດນຳໃຊ້ຄອມພິວເຕີ ( Word, Excel, Power point, internet ) ໄດ້.
- ✓ ມີປະສົບການເຮັດວຽກດ້ານກົດໝາຍມາກ່ອນຍິ່ງເປັນການດີ.
- ✓ ມີທັກສະການວິເຄາະທີ່ດີ ແລະ ມັກຊອກຮູ້ຮ່ຳຮຽນ.

### ❖ ວິຊາການ ສູນບັດ 03 ຕຳແໜ່ງ ( Programmer )

**ເງື່ອນໄຂຜູ້ສະໝັກ:** ເພດ: **ຍິງ ຫຼື ຊາຍ** ແລະ ມີອາຍຸບໍ່ເກີນ **30** ປີ.

- ✓ ມີໃບປະກາດຈົບປະລິນຍາຕີຂຶ້ນໄປ ດ້ານວິທະຍາສາດຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ ຫຼື ສາຂາທີ່ກ່ຽວຂ້ອງກັບການພັດທະນາຊອບແວ ຈາກພາຍໃນ ຫຼື ຕ່າງປະເທດ.
- ✓ ຄະແນນ CGPA ໂດຍສະເລ່ຍ **2.70** ຂຶ້ນໄປ.

- ✓ ສາມາດສື່ສານພາສາອັງກິດ (ເວົ້າ, ຂຽນ, ອ່ານ) ໄດ້ໃນລະດັບດີ.
- ✓ ມີຄວາມຊໍານານໃນພາສາໂປຼແກມໃດໜຶ່ງເຊັ່ນ: Java, C/C++, C#, VB.NET, PHP.
- ✓ ມີຄວາມຮູ້ໃນພາສາ SQL.
- ✓ ມີຄວາມຮູ້ໃນ UX Design ແລະ CSS ຈະພິຈາລະນາເປັນພິເສດ.
- ✓ ມີຄວາມຄິດສ້າງສັນ ຫຼື ມີຜົນງານກ່ຽວກັບການສ້າງ ຫຼື ຂຽນໂປແກຼມທີ່ໄດ້ຮັບການຍອມຮັບ ຍິ່ງເປັນການດີ.
- ✓ ສາມາດເຮັດວຽກນອກໂມງການໄດ້ ແລະ ມີຄວາມເສຍສະຫຼະສູງ.

## II. ຄຸນລັກສະນະຜູ້ສະໝັກເຮັດວຽກກັບ ທຄຕລ:

- ✓ ຊື່ສັດບໍລິສຸດ, ມະນຸດສໍາພັນດີ.
- ✓ ກົງຕໍ່ເວລາ ແລະ ມີຄວາມເສຍສະຫຼະສູງ.
- ✓ ມີໃຈຮັກໃນວຽກງານບໍລິການ.
- ✓ ມີຄວາມສາມັກຄີ, ສາມາດເຮັດວຽກເປັນທີມໄດ້.
- ✓ ລະອຽດຮອບຄອບ, ມີລະບຽບວິໄນ ແລະ ຮັບຜິດຊອບສູງ.
- ✓ ບຸກຄະລິກວ່ອງໄວຫ້າວຫັນ ແລະ ອົດທົນ.
- ✓ ສາມາດເຮັດວຽກພາຍໃຕ້ຄວາມກົດດັນໄດ້.

## III. ວິທີສະໝັກວຽກ:

ຜູ້ທີ່ມີເງື່ອນໄຂຄົບຖ້ວນຕາມການປະກາດ ແລະ ມີຄວາມສົນໃຈທີ່ຈະສະໝັກວຽກໃນຕໍາແໜ່ງດັ່ງກ່າວ ໃຫ້ເອົາໃຈໃສ່ປະຕິບັດຕາມຂັ້ນຕອນດັ່ງນີ້:

1) ສໍາລັບການສະໝັກງານຂອງ ທຄຕລ ສໍານັກງານໃຫຍ່ນີ້ ທໍາອິດຜູ້ສະໝັກຕ້ອງກວດກາເງື່ອນໄຂຕົນເອງ ກັບ ເງື່ອນໄຂຕໍາແໜ່ງງານທີ່ຈະສະໝັກໃຫ້ລະອຽດວ່າຕົນເອງຖືກຕາມເງື່ອນໄຂຂອງຕໍາແໜ່ງງານທີ່ລະບຸຢ່າງຄົບຖ້ວນແລ້ວ ຫຼື ບໍ່.

2) ພາຍຫຼັງໄດ້ຕໍາແໜ່ງທີ່ຕ້ອງການ ແລະ ຖືກຕ້ອງຕາມເງື່ອນໄຂແລ້ວ ໃຫ້ດາວໂຫຼດຟອມສະໝັກວຽກໄດ້ທີ່ເວັບໄຊສ໌ ຂອງ ທຄຕລ www.bcel.com.la ເຂົ້າໄປທີ່ສະໝັກງານ> ດາວໂຫຼດຟອມສະໝັກວຽກ. ໝາຍເຫດ: ຟອມສະໝັກງານຕ້ອງດາວໂຫຼດຈາກເວັບໄຊສ໌ເທົ່ານັ້ນ ຈະບໍ່ມີການຂາຍ ຫຼື ແຈກຟອມຢູ່ ທຄຕລ ສໍານັກງານໃຫຍ່.

3) ຕື່ມຂໍ້ມູນຟອມສະໝັກທີ່ດາວໂຫຼດ ແລະ ປະກອບເອກະສານໃຫ້ຄົບຖ້ວນດັ່ງນີ້:

- ຊີວະປະຫວັດເປັນເຫຼັ້ມ 4 ໜ້າ (ກາແດງ ແລະ ບໍ່ເກີນ 3 ເດືອນ)
- ຮູບຖ່າຍ 3x4 ຈໍານວນ 04 ໃບ (ບໍ່ເກີນ 3 ເດືອນ).
- ສໍາເນົາບັດປະຈໍາຕົວ ແລະ ສໍາມະໂນຄົວ.
- ສໍາເນົາໃບປະກາດວິຊາສະເພາະ ແລະ ໃບຄະແນນ.
- ຄ່າທໍານຽມໃນການສະໝັກຈໍານວນ 10.000 ກີບ.
- ສໍາເນົາໃບປະກາດ ມ ປາຍ.
- ໃບກວດສຸຂະພາບ (ກາແດງ ແລະ ບໍ່ເກີນ 6 ເດືອນ).
- ໃບຢັ້ງຢືນຄໍ້າປະກັນ (ກາແດງ ແລະ ບໍ່ເກີນ 3 ເດືອນ).
- ໃບແຈ້ງໂທດ (ກາແດງ ແລະ ບໍ່ເກີນ 3 ເດືອນ).
- ໃບຢັ້ງຢືນທີ່ຢູ່ (ກາແດງ ແລະ ບໍ່ເກີນ 3 ເດືອນ).

4) ນັກສອບເສັງທຸກທ່ານຕ້ອງເອົາໃຈໃສ່ປະກອບເອກະສານໃຫ້ຄົບຖ້ວນຕາມ ແລະ ຖືກຕາມເງື່ອນໄຂ ທະນາຄານ ໄດ້ລະບຸໄວ້ດ້ານເທິງ.

5) ພາຍຫຼັງສຳເລັດປະກອບຟອມສະໝັກງານ ແລະ ເອກະສານຕ່າງໆ ຢ່າງຄົບຖ້ວນ ທ່ານສາມາດນຳສົ່ງເອກະສານໄດ້ທີ່ **ພະແນກຈັດຕັ້ງ-ພະນັກງານ, ທຄຕລ ສຳນັກງານໃຫຍ່ ຕຶກ C, ຊັ້ນ 4** ໃນໂມງລັດຖະການ 08:30 – 15:30 ໂມງ; ນັບແຕ່ ***ວັນທີ 24/04/2017*** ເປັນຕົ້ນໄປໂດຍໃຫ້ຖືໃບປະກາດວິຊາສະເພາະ ແລະ ໃບຄະແນນ ສະບັບຂອງແທ້ມາຢັ້ງຢືນໃນການສົ່ງແບບຟອມສະໝັກງານ.

**<u>ໝາຍເຫດ:</u> ທຄຕລ ຈະບໍ່ພິຈາລະນາຟອມສະໝັກທີ່ບໍ່ຄົບເງື່ອນໄຂ ຫຼື ເອກະສານບໍ່ຄົບຕາມທີ່ໄດ້ປະກາດ.**

ນະຄອນຫຼວງວຽງຈັນ, ວັນທີ 20/04/2017

ຫົວໜ້າພະແນກຈັດຕັ້ງ-ພະນັກງານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ພະແນກ ຈັດຕັ້ງແລະພະນັກງານ

ບຸດສະດີ ມູນລາດຊະວົງ